ສາລະບານ


ມະຕິຕົກລົງ....................................................................................................................4
ລັດຖະດຳລັດ ..................................................................................................................5
ກົດໝາຍ ວ່າດ້ວຍ ທະນາຄານ.........................................................................................6
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ .....................................................6
ໝວດທີ 1 ບົດບັນຍັດ ທົ່ວໄປ.......................................................................................6
ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສ ປປ ລາວ. .................................6
ມາດຕາ 2. ທີ່ຕັ້ງຂອງ ທະນາຄານ.....................................................................................6
ມາດຕາ 3. ພາລະບົດບາດຂອງທະນາຄານ .......................................................................6
ໝວດທີ 2 ຂອບເຂດສິດ ແລະ ໜ້າທີ່ຂອງທະນາຄານ ແຫ່ງ ສ ປປ ລາວ...............................7
ມາດຕາ 4 (ໃໝ່). ຂອບເຂດສິດຂອງທະນາຄານ................................................................7
ມາດຕາ 5(ໃໝ່). ໜ້າທີ່ ຂອງທະນາຄານ..........................................................................7
ໝວດທີ 3 ທຶນ, ກຳໄລ, ຄັງຂະຫຍາຍການຜະລິດ,.............................................................8
ຄັງສຳຮອງທົ່ວໄປ ຂອງທະນາຄານ ແຫ່ງ ສ ປປ ລາວ .......................................................8
ມາດຕາ 6. ທຶນຂອງ ທະນາຄານ .....................................................................................8
ມາດຕາ 8. ຄັງຂະຫຍາຍການຜະລິດຂອງທະນາຄານ...........................................................8
ມາດຕາ 9. ຄັງສຳຮອງທົ່ວໄປຂອງ ທະນາຄານ .................................................................8
ໝວດທີ 4 ສະພາບໍລິຫານຂອງ ທະນາຄານແຫ່ງ ສ ປປ ລາວ ..............................................9
ມາດຕາ 10. ສະພາບໍລິຫານ............................................................................................9
ມາດຕາ 11. ໂຄງປະກອບຂອງສະພາບໍລິຫານ ..................................................................9
ມາດຕາ 12. ການແຕ່ງຕັ້ງ ແລະ ອາຍຸການຂອງສະພາບໍລິຫານທະນາຄານ ...........................9
ມາດຕາ 13. ການພົ້ນຈາກຕຳແໜ່ງຂອງ ສະມາຊິກສະພາບໍລິຫານ .....................................9
ມາດຕາ 14 (ໃໝ່). ສິດ ແລະ ໜ້າທີ່ຂອງສະພາບໍລິຫານ..................................................10
ມາດຕາ 15. ກອງປະຊຸມສະພາບໍລິຫານ .........................................................................10
ມາດຕາ 16. ມາດຕະຖານ ແລະ ເງື່ອນໄຂຂອງສະມາຊິກສະພາບໍລິຫານ...............................11
ໝວດທີ 5 ຜູ້ວ່າການ, ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ....................................11
ມາດຕາ 17. ການແຕ່ງຕັ້ງຜູ້ວ່າການ ແລະ ຮອງຜູ້ວ່າການ..................................................11
ມາດຕາ 18. ມາດຕະຖານ ແລະ ເງື່ອນໄຂ ຂອງ ຜູ້ວ່າການ ແລະ ຮອງຜູ້ວ່າການ. ..................11
ມາດຕາ 19 (ໃໝ່). ສິດ ແລະ ໜ້າທີ່ຂອງຜູ້ວ່າການ ແລະ ຮອງຜູ້ວ່າການ.............................12
ໝວດທີ 6 ການກວດກາທະນາຄານແຫ່ງ ສ ປປ ລາວ.........................................................12
ມາດຕາ 20. ການກວດກາບັນຊີ .....................................................................................12
ມາດຕາ 21. ການກວດກາຈາກລັດຖະບານ ......................................................................13
ມາດຕາ 22. ການຮັກສາຄວາມລັບ ..................................................................................13
ໝວດທີ 7 ທົວໜ່ວຍເງິນຕາ, ທະນະບັດ ແລະ ເງິນຫລຽນ ................................................13

ມາດຕາ 23. ຫົວໜ່ວຍເງິນຕາຂອງ ສ ປປ ລາວ......13
ມາດຕາ 24. ການພິມທະນະບັດ ແລະ ການຫລໍ່ເງິນຫລຽນ......13
ມາດຕາ 25. ຄວາມສາມາດຊື້ຕາມກົດໝາຍ......14
ມາດຕາ 26. ການຖອນເງິນຄືນຈາກການຈໍລະຈອນ......14
ມາດຕາ 27. ການປ່ຽນເງິນທີ່ໃຊ້ບໍ່ໄດ້......14
ມາດຕາ 28. ຄວາມຮັບຜິດຊອບກ່ຽວກັບການເຄື່ອນຍ້າຍທະນະບັດ......14
ໝວດທີ 8 ຄັງສຳຮອງເງິນຕາຕ່າງປະເທດ,......14
ການແລກປ່ຽນເງິນຕາຕ່າງປະເທດແລະ ຄັງສຳຮອງພິເສດ......14
ມາດຕາ 29. ຄັງສຳຮອງເງິນຕາຕ່າງປະເທດ......14
ມາດຕາ 30. ການລາຍງານສະພາບ ຄັງສຳຮອງເງິນຕາຕ່າງປະເທດ......15
ມາດຕາ 31. ການດຳເນີນທຸລະກິດຂອງ ທະນາຄານ......15
ມາດຕາ 32. ຂອບເຂດການພົວພັນທຸລະກິດ ຂອງ ທະນາຄານ......16
ມາດຕາ 33. ບັນຊີຄັງສຳຮອງພິເສດ......16
ມາດຕາ 34. ວິທີການແກ້ໄຂຄັງສຳຮອງພິເສດ......16
ໝວດທີ 9 ການພົວພັນ ກັບສະຖາບັນການເງິນ......17
ມາດຕາ 35. ສິດ ແລະ ຂໍ້ຕ້ອງຫ້າມໃນການເຄື່ອນໄຫວ......17
ມາດຕາ 36. ການຊື້, ຂາຍເອກະສານມີຄ່າ......17
ມາດຕາ 37. ການໃຫ້ກູ້ຢືມເງິນລ່ວງໜ້າ ໂດຍມີການຄ້ຳປະກັນ.......17
ມາດຕາ 38. ການໃຫ້ກູ້ຢືມເງິນລ່ວງໜ້າໂດຍບໍ່ມີການຄ້ຳປະກັນ.......18
ມາດຕາ 39 (ໃໝ່). ການກຳນົດອັດຕາດອກເບ້ຍ.......18
ມາດຕາ 40 (ໃໝ່). ການຮັກສາ ລະດັບເງິນແຮຝາກບັງຄັບ......18
ມາດຕາ 41 (ໃໝ່). ການກຳນົດຖານະເງິນຕາຕ່າງປະເທດສຸດທິ......18
ມາດຕາ 42 (ໃໝ່). ການກວດກາລະບຽບການຕ່າງໆ ຂອງສະຖາບັນການເງິນ......18
ມາດຕາ 43 (ໃໝ່). ການຄ້ຳປະກັນເງິນກູ້ຈາກຕ່າງປະເທດ......18
ມາດຕາ 44 (ໃໝ່). ເຄື່ອງມືໃນການ ຊຳລະ......19
ໝວດທີ 10 ການພົວພັນ ກັບລັດຖະບານ......19
ມາດຕາ 45. ການລາຍງານຕໍ່ ລັດຖະບານ......19
ມາດຕາ 46. ບັນຊີເງິນຝາກຂອງລັດຖະບານ......19
ມາດຕາ 47. ການຖືບັນຊີເງິນຝາກ ຂອງລັດຖະບານຢູ່ຕ່າງປະເທດ......19
ມາດຕາ 48. ການຄຸ້ມຄອງພັນທະບັດ......19
ມາດຕາ 49. ການກູ້ຢືມເງິນຈາກຕ່າງປະເທດ......19
ມາດຕາ 50. ການໃຫ້ກູ້ຢືມເງິນລ່ວງໜ້າ ແກ່ລັດຖະບານ......19
ມາດຕາ 51. ຂອບເຂດການໃຫ້ກູ້ຢືມລ່ວງໜ້າ......20
ມາດຕາ 52. ການພົວພັນກັບອົງການຈັດຕັ້ງການເງິນສາກົນ......20

ໝວດທີ 11 ບັນຊີທະນາຄານ ແລະ ການ ລາຍງານ ....................................................................20
ມາດຕາ 53 (ໃໝ່). ສົກປີ ການບັນຊີທະນາຄານ....................................................................20
ມາດຕາ 54. ການລາຍງານປະຈໍາປີຕໍ່ລັດຖະບານ ....................................................................20
ໝວດທີ 12 ມາດຕະການຕໍ່ຜູ້ລະເມີດ....................................................................21
ມາດຕາ 55 (ໃໝ່). ການລະເມີດອັດຕາສ່ວນ ເງິນແຮຝາກບັງຄັບ ແລະ ລະບຽບການອື່ນໆ.............21
ມາດຕາ 56. ການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ....................................................................21
ມາດຕາ 57. ການດໍາເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ....................................................................21
ມາດຕາ 58. ການເປີດເຜີຍຄວາມລັບ....................................................................21
ມາດຕາ 59. ການສວຍໃຊ້ໜ້າທີ່ຕໍາແໜ່ງ ....................................................................21
ມາດຕາ 60. ການລະເມີດອື່ນໆ....................................................................21
ໝວດທີ 13 ບົດບັນຍັດ ສຸດທ້າຍ ....................................................................22
ມາດຕາ 61. ການຈັດຕັ້ງປະຕິບັດ ....................................................................22
ມາດຕາ 62. ຜົນສັກສິດ ....................................................................22

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05 / ສພຊ

# ມະຕິຕົກລົງ

**ຂອງສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍທະນາຄານ

ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ອີງຕາມມາດຕາ 40 ຂໍ້ທີ 2 ຂອງລັດຖະທຳມະນູນ ແລະ ມາດຕາ 2 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ພາຍຫລັງທີ່ໄດ້ພິຈາລະນາ, ອະພິປາຍຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ກອງປະຊຸມເທື່ອທີ່ 7 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ III ໃນວາລະກອງປະຊຸມຕອນບ່າຍວັນເສົາ, ທີ 14 ຕຸລາ 1995.

**ຕົກລົງ:**

ມາດຕາ 1: ຮັບຮອງເອົາກົດໝາຍ ວ່າດ້ວຍດ້ວຍທະນາຄານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໂດຍຄະແນນສຽງຢ່າງເປັນເອກະສັນ.

ມາດຕາ 2: ມະຕິຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 14 ຕຸລາ 1995

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 29/ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 , ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມ ເທື່ອທີ 7 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ III ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 05 ລົງວັນທີ 14 ຕຸລາ 1995.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 2: ລັດຖະດຳລັດ ສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 26 ຕຸລາ 1995
ປະທານປະເທດ
ໜູຮັກ ພູມສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

<u>ສະພາແຫ່ງຊາດ</u>

ເລກທີ 05/95/ສພຊ

14/10/1995

# ກົດຫມາຍ ວ່າດ້ວຍ ທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ຫມວດທີ 1 ບົດບັນຍັດ ທົ່ວໄປ

**ມາດຕາ 1. ຫນ້າທີ່ຂອງກົດຫມາຍວ່າດ້ວຍ ທະນາຄານແຫ່ງ ສ ປປ ລາວ.**

ກົດຫມາຍວ່າດ້ວຍ ທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີຫນ້າທີ່ກຳນົດລັກສະນະ, ພາລະບົດບາດ, ຂອບເຂດສິດ ແລະ ຫນ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງທະນາຄານແຫ່ງ ສ ປປ ລາວ ໃນການປະຕິບັດນະໂຍບາຍເງິນຕາ, ຮັກສາລາຄາເງິນກີບໃຫ້ມີສະຖຽນລະພາບ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງ ສ ປປ ລາວ ໃຫ້ຂະຫຍາຍຕົວ ແລະ ມີປະສິດທິພາບ.

**ມາດຕາ 2. ທີ່ຕັ້ງຂອງ ທະນາຄານ.**

ທະນາຄານແຫ່ງ ສ ປປ ລາວ ແມ່ນສະຖາບັນເງິນຕາຂອງລັດຖະບານ, ມີຖານະທຽບເທົ່າກະຊວງ, ເປັນທະນາຄານກາງຂອງປະເທດ, ມີຖານະເປັນນິຕິບຸກຄົນ ແລະ ມີສຳນັກງານໃຫຍ່ ຕັ້ງຢູ່ນະຄອນຫລວງວຽງຈັນ.

**ມາດຕາ 3. ພາລະບົດບາດຂອງທະນາຄານ**

ທະນາຄານແຫ່ງ ສ ປປ ລາວ ມີພາລະບົດບາດດັ່ງນີ້:

1. ເປັນເສນາທິການໃຫ້ແກ່ລັດຖະບານ ໃນການ ຄຸ້ມຄອງມະຫາພາກທາງດ້ານເງິນຕາ, ສິນເຊື່ອ ຂອງ ທະນາຄານ ໃນຂອບເຂດທົ່ວປະເທດ;

2. ສົ່ງເສີມ ແລະ ປົກປັກຮັກສາສະຖຽນລະພາບ ຂອງເງິນກີບຕໍ່ພາຍໃນ ແລະ ຕ່າງປະເທດ, ຍົກສູງປະສິດທິພາບຂອງກົນໄກຊຳລະ ແລະ ຖານະການຊຳລະຫນີ້ ຂອງລະບົບທະນາຄານ ເພື່ອເຮັດໃຫ້ລະບົບເງິນຕາ, ສິນເຊື່ອຂອງ ສປປລາວ ເຄື່ອນໄຫວມີປະສິດທິພາບ ແລະ ປອດໄສ;

3. ສົ່ງເສີມ ແລະ ອຳນວຍຄວບຄຸມການເຄື່ອນໄຫວ ຂອງເງິນຕາ ຮັບໃຊ້ແຜນພັດທະນາເສດຖະກິດ - ສັງຄົມ ຂອງ ສ ປປ ລາວ ໃຫ້ຂະຫຍາຍຕົວ.

## ໝວດທີ 2 ຂອບເຂດສິດ ແລະ ໜ້າທີ່ຂອງທະນາຄານ ແຫ່ງ ສ ປປ ລາວ

### ມາດຕາ 4 (ໃໝ່). ຂອບເຂດສິດຂອງທະນາຄານ

ທະນາຄານແຫ່ງ ສ ປປ ລາວ ມີສິດດັ່ງນີ້:

1. ພິມຈຳໜ່າຍ ທະນະບັດ ແລະ ເງິນຫລຽນພຽງແຕ່ຜູ້ດຽວຕາມການອະນຸມັດ ຂອງ ລັດຖະບານ ພ້ອມທັງຄຸ້ມຄອງການຈໍລະຈອນເງິນຕາໃນຂອບເຂດທົ່ວປະເທດ;

2. ຄຸ້ມຄອງມະຫາພາກທາງດ້ານເງິນຕາ, ເປັນທະນາຄານ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທັງເປັນຜູ້ໃຫ້ກູ້ຢືມ ສຸດທ້າຍແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນດັ່ງກ່າວ ເພື່ອຈຸດປະສົງປະຕິບັດນະໂຍບາຍເງິນຕາ;

3. ປະຕິບັດ ນະໂຍບາຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນ;

4. ຈຳໜ່າຍພັນທະບັດ ໃນນາມຂອງຕົນ ເພື່ອຈຸດປະສົງປະຕິບັດນະໂຍບາຍເງິນຕາ, ຊື້, ຂາຍພັນທະບັດໂດຍກົງ ກັບທະນາຄານທຸລະກິດ ແລະ ສະຖາບັນການເງິນ;

5. ອະນຸມັດ ການສ້າງຕັ້ງສາຂາ ຂອງທະນາຄານແຫ່ງ ສ ປປ ລາວ, ທະນາຄານທຸລະກິດພາຍໃນ, ທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຂອງຕົນຕາມການຕົກລົງຂອງລັດຖະບານ.

### ມາດຕາ 5(ໃໝ່). ໜ້າທີ່ ຂອງທະນາຄານ

ທະນາຄານ ແຫ່ງ ສ ປປ ລາວ ມີໜ້າທີ່ດັ່ງນີ້:

1. ຄຸ້ມຄອງ-ກວດກາ ການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ເພື່ອຮັບ ປະກັນຄວາມໝັ້ນຄົງ ແລະ ການຂະຫຍາຍຕົວຂອງລະບົບທະນາຄານ ແລະ ສະຖາບັນການເງິນດັ່ງກ່າວ;

2. ຮັກສາ ແລະ ຄຸ້ມຄອງ ຄັງສຳຮອງເງິນຕາຕ່າງປະເທດ;

3. ເກັບກຳ, ລວບລວມ ແລະ ວິໃຈຂໍ້ມູນຂ່າວສານທາງດ້ານເສດຖະກິດ-ການເງິນ, ເງິນຕາ ແລະ ການເຄື່ອນໄຫວຂອງທະນາຄານ ແລະ ສະຖາບັນການເງິນຈາກບຸກຄົນ ແລະ ຂະແໜງການທີ່ກ່ຽວຂ້ອງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ການວາງນະໂຍບາຍເງິນຕາ ແລະ ວຽກງານທະນາຄານ;

4. ລາຍງານ ແລະ ສະເໜີຄວາມເຫັນ ກ່ຽວກັບບັນຫາເສດຖະກິດ, ເງິນຕາ, ການທະນາຄານໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;

5. ຄຸ້ມຄອງ ແລະ ດັດສົມບໍລິມາດເງິນຕາໃນຂອດຈໍລະຈອນຕາມແຜນການອະນຸມັດຂອງລັດຖະບານ;

6. ເປັນຕົວແທນໃຫ້ລັດຖະບານຢູ່ໃນອົງການຈັດຕັ້ງການເງິນສາກົນ, ພົວພັນ, ຮ່ວມມືແລະເຊັນສັນຍາກ່ຽວກັບການເງິນ,ເງິນຕາກັບຕ່າງປະເທດ ແລະ ອົງການຈັດຕັ້ງການເງິນສາກົນ ຕາມການມອບໝາຍຂອງລັດຖະບານ;

7. ປະຕິບັດໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້ ຫລື ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3 ທຶນ, ກຳໄລ, ຄັງຂະຫຍາຍການຜະລິດ, ຄັງສຳຮອງທົ່ວໄປ ຂອງທະນາຄານ ແຫ່ງ ສ ປປ ລາວ

### ມາດຕາ 6. ທຶນຂອງ ທະນາຄານ

ທະນາຄານແຫ່ງ ສ ປປ ລາວ ມີທຶນຈົດທະບຽນ ໂດຍແມ່ນລັດຖະບານເປັນຜູ້ປະກອບໃຫ້ ແລະ ລັດຖະບານ ເປັນເຈົ້າຂອງທຶນພຽງຜູ້ດຽວ. ທະນາຄານ ແຫ່ງ ສ ປປ ລາວ ເຄື່ອນໄຫວວຽກງານຂອງຕົນ ຕາມຫລັກການໄລ່ລຽງເສດຖະກິດ.

### ມາດຕາ 7. ກຳໄລສຸດທິປະຈຳປີ ຂອງ ທະນາຄານ

ກຳໄລສຸດທິປະຈຳປີຂອງ ທະນາຄານແຫ່ງ ສ ປປ ລາວ ແມ່ນຈຳນວນຜິດດ່ຽງ ລະຫວ່າງລາຍໄດ້ໃນປີ ແລະ ລາຍຈ່າຍໃນປີ.

ລາຍຈ່າຍໃນປີລວມມີ:

- ຈ່າຍຄ່າບໍລິຫານ, ວິຊາສະເພາະ;
- ຈ່າຍຄ່າຫລຸ້ຍຫ້ຽນ ຊັບສິນບັດຄົງທີ່;
- ຈ່າຍຄ່າເສື່ອມມູນຄ່າຂອງເງິນ ແລະ ໜີ້ຕ້ອງຮັບທວງຍາກ;
- ຈ່າຍເງິນແຮ ເພື່ອການສ່ຽງໄພ ຂອງ ທະນາຄານ.

ສະພາບໍລິຫານ ຂອງທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກຳນົດ ອັດຕາສ່ວນຈຳນວນເງິນທີ່ຫັກຈາກລາຍຮັບ ມາເປັນລາຍຈ່າຍແຕ່ລະປະເພດ.

### ມາດຕາ 8. ຄັງຂະຫຍາຍການຜະລິດຂອງທະນາຄານ

ຄັງຂະຫຍາຍການຜະລິດຂອງທະນາຄານແຫ່ງ ສ ປປ ລາວ ແມ່ນຄັງທີ່ສະສົມໄວ້ ເພື່ອຂະຫຍາຍກິດຈະການ ແລະ ຊັບສິນ ຂອງທະນາຄານແຫ່ງ ສ ປປ ລາວ. ຄັງຂະຫຍາຍການ ຜະລິດນີ້ແມ່ນຫັກຈາກກຳໄລສຸດທິຂອງທະນາຄານໃນແຕ່ລະປີ. ສະພາບໍລິຫານທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກຳນົດອັດຕາສ່ວນຈຳນວນເງິນ ທີ່ຈະຫັກໃນແຕ່ລະປີ.

### ມາດຕາ 9. ຄັງສຳຮອງທົ່ວໄປຂອງ ທະນາຄານ

ຄັງສຳຮອງທົ່ວໄປ ຂອງທະນາຄານແຫ່ງ ສ ປປ ລາວ ແມ່ນຄັງສະເພາະຂອງທະນາຄານແຫ່ງ ສ ປປ ລາວ ທີ່ສ້າງຂຶ້ນໄວ້ເພື່ອທົດແທນການຂາດທຶນ ຈາກການເຄື່ອນໄຫວວຽກງານ ຂອງທະນາຄານ ໃນການປະຕິບັດນະໂຍບາຍເງິນຕາຂອງທະນາຄານ.

ຄັງສຳຮອງທົ່ວໄປຂອງ ທະນາຄານແມ່ນຫັກຈາກກຳໄລສຸດທິປະຈຳປີ ຕາມການກຳນົດ ຂອງສະພາບໍລິຫານ ພາຍຫລັງທີ່ໄດ້ຫັກສ້າງຄັງຂະຫຍາຍການຜະລິດອອກແລ້ວ.

ກໍາໄລສຸດທິທີ່ຍັງເຫລືອທັງຫມົດ ຈາກການຫັກສ້າງຄັງຂະຫຍາຍການຜະລິດ ແລະ ຄັງສໍາຮອງທົ່ວໄປຂອງທະນາຄານ ລ້ວນແຕ່ຕ້ອງໄດ້ມອບໃຫ້ລັດ. ໃນກໍລະນີຂາດທຶນຍ້ອນການປະຕິບັດແຜນຍຸດທະສາດຂອງລັດ, ລັດຖະບານຈະທົດແທນໃຫ້.

## ຫມວດທີ 4 ສະພາບໍລິຫານຂອງ ທະນາຄານແຫ່ງ ສ ປປ ລາວ

### ມາດຕາ 10. ສະພາບໍລິຫານ

ສະພາບໍລິຫານທະນາຄານແຫ່ງ ສ ປປ ລາວ ແມ່ນອົງການບໍລິຫານສູງສຸດຂອງທະນາຄານແຫ່ງ ສປປລາວ.

ສະພາບໍລິຫານ ປະກອບດ້ວຍ ສະມາຊິກແຕ່ເຈັດຫາເກົ້າຄົນໂດຍມີປະທານ,ຮອງປະທານ ແລະ ກໍາມະການຈໍານວນຫນຶ່ງ.

### ມາດຕາ 11. ໂຄງປະກອບຂອງສະພາບໍລິຫານ

ສະມາຊິກສະພາບໍລິຫານທະນາຄານ ແຫ່ງ ສ ປປ ລາວ ປະກອບດ້ວຍ:

- ຮອງນາຍົກລັດຖະມົນຕີແຫ່ງ ສ ປປ ລາວ ເປັນປະທານ;
- ຜູ້ວ່າການທະນາຄານແຫ່ງ ສ ປປ ລາວ ເປັນຮອງປະທານ;
- ລັດຖະມົນຕີວ່າການ ກະຊວງການເງິນເປັນຮອງປະທານ;
- ຮອງຜູ້ວ່າການທະນາຄານແຫ່ງ ສ ປປ ລາວ ເປັນກໍາມະການ;
- ສະມາຊິກສະພາບໍລິຫານອີກຈໍານວນຫນຶ່ງ ຊຶ່ງປະກອບດ້ວຍຜູ້ທີ່ມີຄວາມຮູ້, ຄວາມສາມາດ ແລະ ມີປະສົບປະການທາງດ້ານກະສິກໍາ, ອຸດສາຫະກໍາ, ການຄ້າ, ການທະນາຄານ ແລະ ການເງິນທີ່ຄັດເລືອກມາຈາກຂະແຫນງອື່ນໆເປັນກໍາມະການ.

### ມາດຕາ 12. ການແຕ່ງຕັ້ງ ແລະ ອາຍຸການຂອງສະພາບໍລິຫານທະນາຄານ

ສະມາຊິກສະພາບໍລິຫານຂອງທະນາຄານແຫ່ງ ສ ປປ ລາວ ຖືກແຕ່ງຕັ້ງ ຫລື ປົດຕໍາແຫນ່ງໂດຍນາຍົກລັດຖະມົນຕີຕາມການສະເຫນີ ຂອງ ຜູ້ວ່າການທະນາຄານແຫ່ງ ສ ປປ ລາວ.

ສະພາບໍລິຫານມີອາຍຸການ ຫ້າ ປີ. ສະມາຊິກສະພາບໍລິຫານຂອງທະນາຄານ ສາມາດຖືກແຕ່ງຕັ້ງຄືນໃຫມ່ໄດ້.

### ມາດຕາ 13. ການພົ້ນຈາກຕໍາແຫນ່ງຂອງ ສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານທະນາຄານແຫ່ງ ສ ປປ ລາວ ພົ້ນຈາກຕໍາແຫນ່ງໃນກໍລະນີຫມົດອາຍຸການ, ເສຍຊີວິດ, ລາອອກ ຫລື ຖືກປົດຕໍາແຫນ່ງ. ການລາອອກຕ້ອງໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ.

ໃນກໍລະນີທີ່ສະມາຊິກສະພາບໍລິຫານຜູ້ໃດຜູ້ຫນຶ່ງຫາກເສຍຊີວິດ, ລາອອກ ຫລື ຖືກປົດຕໍາແຫນ່ງ ຊຶ່ງຈະເຮັດໃຫ້ວຽກງານຂອງທະນາຄານ ພົບຄວາມຫຍຸ້ງຍາກນັ້ນ ນາຍົກລັດຖະມົນຕີຈະແຕ່ງ

ຕັ້ງຜູ້ໃຫມ່ແທນໃນເວລາອັນດ່ວນ ຕາມເນື້ອໃນ ຂອງມາດຕາ 12 ຂອງກົດຫມາຍສະບັບນີ້ເພື່ອສືບຕໍ່ຫນ້າທີ່ຕາມໄລຍະເວລາອາຍຸການ ສະພາບໍລິຫານທີ່ຍັງເຫລືອນັ້ນ.

### ມາດຕາ 14 (ໃໝ່). ສິດ ແລະ ຫນ້າທີ່ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ຫນ້າທີ່ດັ່ງນີ້:

1. ເປັນອົງການເສນາທິການຂອງລັດຖະບານກ່ຽວກັບ ບັນຫາເສດຖະກິດ -ເງິນຕາ;

2. ຮັບຮອງເອົາໂຄງປະກອບການຈັດຕັ້ງ ແລະ ລະບຽບພາຍໃນຂອງທະນາຄານແຫ່ງ ສ ປປ ລາວ;

3. ຮັບຮອງເອົາລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ, ສິນເຊື່ອ ແລະ ລະບຽບການອື່ນໆ ຂອງທະນາຄານ ແຫ່ງ ສ ປປ ລາວ;

4.ຄົ້ນຄວ້ານະໂຍບາຍເງິນຕາ, ນະໂຍບາຍອັດຕາແລກປ່ຽນ, ນະໂຍບາຍສິນເຊື່ອຕາມການສະເຫນີຂອງຜູ້ວ່າການທະນາຄານ ແຫ່ງ ສ ປປ ລາວ;

5. ກໍານົດອັດຕາສ່ວນຊັບສິນທີ່ໃຊ້ເປັນເງິນສົດໄດ້ໄວ, ອັດຕາສ່ວນເງິນແຮຝາກບັງຄັບປະເພດຕ່າງໆ ແລະ ພັນທະຄ້າຍຄືກັນ, ກໍານົດວິທີຄິດໄລ່ອັດຕາສ່ວນດັ່ງກ່າວເພື່ອນໍາໃຊ້ຢ່າງເປັນເອກະພາບ ສໍາລັບທະນາຄານທຸລະກິດປະເພດດຽວກັນ;

6. ຮັບຮອງເອົາລະບຽບການກ່ຽວກັບ ການກໍານົດອັດຕາດອກເບ້ຍເງິນຝາກ, ເງິນກູ້, ການຮັບຊ່ວງຊື້ຫລຸດພັນທະບັດ ແລະ ອັດຕາສ່ວນອື່ນໆ;

7. ຮັບຮອງເອົາບົດລາຍງານປະຈໍາປີ, ໃບສະຫລຸບຊັບສົມບັດ, ບົດລາຍງານຜົນໄດ້ຮັບປະຈໍາປີ ແລະ ງົບປະມານປະຈໍາປີຂອງທະນາຄານ ແຫ່ງ ສ ປ ປ ລາວ;

8. ຮັບຮອງເອົາ ຜູ້ກວດກາບັນຊີ ຈາກພາຍນອກ ເພື່ອດໍາເນີນການກວດກາ ວຽກງານຂອງທະນາຄານແຫ່ງ ສ ປ ປ ລາວ.

### ມາດຕາ 15. ກອງປະຊຸມສະພາບໍລິຫານ

ສະພາບໍລິຫານເຄື່ອນໄຫວວຽກງານຂອງຕົນ ຕາມລະບອບປະຊຸມ. ກອງປະຊຸມສະພາບໍລິຫານໄຂຂຶ້ນຢ່າງຫນ້ອຍສອງເດືອນຕໍ່ຄັ້ງ ຕາມການຮຽກໂຮມຂອງປະທານ ຫລື ຕາມການສະເຫນີຂອງສະມາຊິກສະພາບໍລິຫານຢ່າງຫນ້ອຍສອງຄົນຂຶ້ນໄປ.

ກອງປະຊຸມສະພາບໍລິຫານ ສະໄຫມສາມັນ ຕ້ອງແຈ້ງລ່ວງຫນ້າເປັນລາຍລັກອັກສອນພ້ອມດ້ວຍລະບຽບວາລະກອງປະຊຸມໃຫ້ສະມາຊິກສະພາບໍລິຫານທະນາຄານຊາບ ຢ່າງຫນ້ອຍເຈັດວັນກ່ອນວັນໄຂກອງປະຊຸມ. ໃນກໍລະນີທີ່ຈໍາເປັນກໍຈະໄຂກອງປະຊຸມ ສະໄຫມວິສາມັນຂຶ້ນໄດ້ທຸກເວລາ.

ກອງປະຊຸມສະພາບໍລິຫານຈະໄຂຂຶ້ນໄດ້ ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຫລາຍກວ່າເຄິ່ງຫນຶ່ງ ຂອງ ຈໍານວນສະມາຊິກທັງຫມົດ.

ກອງປະຊຸມສະພາບໍລິຫານຕົກລົງບັນຫາໂດຍຖືເອົາຕາມສຽງສ່ວນຫລາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງປະທານເປັນອັນຕັດສິນ.

**ມາດຕາ 16. ມາດຕະຖານ ແລະ ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານຕ້ອງມີມາດຕະຖານ ແລະ ເງື່ອນໄຂດັ່ງນີ້:

1. ສະມາຊິກສະພາບໍລິຫານ ຕ້ອງເປັນບຸກຄົນທີ່ມີຄຸນສົມບັດ, ຄວາມສາມາດ, ມີບົດຮຽນ, ໄດ້ຮັບຄວາມເຊື່ອຖື ຈາກວົງການ ການເງິນ, ເງິນຕາ, ວົງການທຸລະກິດ, ຂະແໜງການວິຊາສະເພາະ;

2. ບຸກຄົນດັ່ງຕໍ່ໄປນີ້ ບໍ່ສາມາດຖືກແຕ່ງຕັ້ງ ເປັນສະມາຊິກສະພາບໍລິຫານຂອງທະນາຄານແຫ່ງສປປລາວ:

- ຜູ້ທີ່ມີຜົວ ຫລື ເມັຽ, ພໍ່, ແມ່, ລູກ, ອ້າຍ, ເອື້ອຍ ຫລື ນ້ອງເປັນຂາຫຸ້ນ ຫລື ຜູ້ຖືຫຸ້ນໃນບໍລິສັດ, ໃນທະນາຄານທຸລະກິດ ຫລື ສະຖາບັນການເງິນດຽວກັນ;

- ເປັນສະມາຊິກຂອງສະພາບໍລິຫານ, ຜູ້ອຳນວຍການ, ຜູ້ຈັດການ ຫລື ສະມາຊິກຂອງທະນາຄານທຸລະກິດ ຫລື ສະຖາບັນການເງິນໃດໜຶ່ງ;

- ເປັນຜູ້ທີ່ຖືກສານຕັດສິນລົງໂທດທາງອາຍາ ຫລື ທາງແພ່ງທີ່ກ່ຽວຂ້ອງກັບຄວາມເຊື່ອຖືໃນການປະຕິບັດໜ້າທີ່ເປັນສະມາຊິກສະພາບໍລິຫານ;

3. ສະມາຊິກສະພາບໍລິຫານທຸກຄົນ ຕ້ອງເປີດເຜີຍຖານະຂອງຕົນທາງດ້ານຜົນປະໂຫຍດ ທີ່ຕົນພົວພັນໂດຍກົງ ຫລື ໂດຍທາງອ້ອມ ຕໍ່ສະພາບໍລິຫານ ແລະ ຕ້ອງງົດອອກສຽງໃນກອງປະຊຸມສະພາບໍລິຫານ ເພື່ອຕົກລົງບັນຫາທີ່ກ່ຽວພັນກັບຕົນ ແຕ່ໃຫ້ນັບເຂົ້າໃນຈຳນວນສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມປະຊຸມ.

4. ໃນການປະຕິບັດໜ້າທີ່ຂອງຕົນ ບໍ່ໃຫ້ສະມາຊິກສະພາບໍລິຫານເອນອຽງ ຕາມຜົນປະໂຫຍດສະເພາະຂອງວິສາຫະກິດ ຫລື ຂອງຂະແໜງການທີ່ພົວພັນກັບຕົນ.

## ໝວດທີ 5 ຜູ້ວ່າການ, ຮອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ

**ມາດຕາ 17. ການແຕ່ງຕັ້ງຜູ້ວ່າການ ແລະ ຮອງຜູ້ວ່າການ.**

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນສະມາຊິກລັດຖະບານ, ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລ້ວນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

ຮອງຜູ້ວ່າການທະນາຄານ ແຫ່ງ ສ ປປ ລາວ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 18. ມາດຕະຖານ ແລະ ເງື່ອນໄຂ ຂອງ ຜູ້ວ່າການ ແລະ ຮອງຜູ້ວ່າການ.**

ຜູ້ທີ່ຈະຖືກແຕ່ງຕັ້ງເປັນຜູ້ວ່າການ ຫລື ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວຈະຕ້ອງ:

- ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ;

- ບໍ່ເປັນຄະນະອຳນວຍການ, ສະມາຊິກສະພາບໍລິຫານ ທະນາຄານທຸລະກິດ, ພະນັກງານໃນສະຖາບັນການເງິນ, ບໍ່ເປັນເຈົ້າຂອງ ຫລື ຂາຫຸ້ນ ຫລື ຜູ້ຖືຫຸ້ນ ໃນສະຖາບັນການເງິນໃດໜຶ່ງ. ໃນກໍລະນີທີ່ໄດ້ຮັບຕຳແໜ່ງດັ່ງກ່າວນີ້ຢູ່ ຕ້ອງໄດ້ລາອອກ.

### ມາດຕາ 19 (ໃໝ່). ສິດ ແລະ ໜ້າທີ່ຂອງຜູ້ວ່າການ ແລະ ຮອງຜູ້ວ່າການ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບວຽກງານເງິນຕາແລະ ການທະນາຄານ;

2. ບໍລິຫານວຽກງານຂອງທະນາຄານ ແຫ່ງ ສປປ ລາວ ແລະ ຄຸ້ມຄອງ-ກວດກາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານ ແຫ່ງ ສປປ ລາວ;

3. ຄົ້ນຄວ້ານະໂຍບາຍເງິນຕາ, ອັດຕາດອກເບ້ຍ,ອັດຕາແລກປ່ຽນເພື່ອສະເໜີຕໍ່ສະພາບໍລິຫານ ແລ້ວນຳສະເໜີ ຕໍ່ລັດຖະບານພິຈາລະນາຕົກລົງ, ປະກາດໃຊ້ ແລະ ຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ;

4. ສະເໜີນາຍົກລັດຖະມົນຕີ ເພື່ອແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຫົວໜ້າກົມ,

5. ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າສາຂາ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການຕົວແທນຂອງທະນາຄານ ແຫ່ງ ສ ປປ ລາວ;

6. ປັບປຸງກົງຈັກການຈັດຕັ້ງ ແລະ ສັບຊ້ອນພະນັກງານທະນາຄານແຫ່ງ ສ ປ ປ ລາວ;

7. ຕັດສິນທຸກບັນຫາຂອງທະນາຄານແຫ່ງ ສ ປປ ລາວ ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ, ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບພາຍໃນຂອງທະນາຄານ ແຫ່ງ ສ ປປ ລາວ.

ຮອງຜູ້ວ່າການທະນາຄານແຫ່ງ ສ ປປ ລາວ ເປັນຜູ້ຊ່ວຍຜູ້ວ່າການທະນາຄານແຫ່ງ ສ ປປ ລາວ ແລະ ອາດຈະໄດ້ຮັບຜິດຊອບ ວຽກງານໃດໜຶ່ງຕາມການມອບໝາຍຂອງຜູ້ວ່າການທະນາຄານແຫ່ງ ສ ປປ ລາວ. ເມື່ອຜູ້ວ່າການທະນາຄານແຫ່ງ ສ ປປ ລາວ ຫາກບໍ່ຢູ່ ຫລື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຜູ້ວ່າການທະນາຄານ ທີ່ໄດ້ຮັບມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ. ການມອບໝາຍໃຫ້ວ່າໜ້າທີ່ແທນນັ້ນ ຕ້ອງເປັນລາຍລັກອັກສອນ ໂດຍກຳນົດເນື້ອໃນ ແລະ ເວລາຢ່າງຈະແຈ້ງ.

## ໝວດທີ 6 ການກວດກາທະນາຄານແຫ່ງ ສ ປປ ລາວ

### ມາດຕາ 20. ການກວດກາບັນຊີ

ທຸກໆທ້າຍປີການບັນຊີຂອງທະນາຄານແຫ່ງ ສ ປປ ລາວ ຕ້ອງມີການກວດກາບັນຊີໂດຍຄະນະກວດກາບັນຊີ ຈາກພາຍໃນທະນາຄານແຫ່ງ ສ ປປ ລາວ, ຄະນະກວດກາບັນຊີ ຈາກກະຊວງການເງິນ ທີ່ລັດຖະບານແຕ່ງຕັ້ງມາ ຫລື ເອົາຜູ້ກວດກາມາຈາກພາຍນອກ.

ກ່ອນຈະສົ່ງລາຍງານໃຫ້ລັດຖະບານ ບັນຊີປະຈຳປີຂອງທະນາຄານແຫ່ງ ສ ປປ ລາວ ຕ້ອງໄດ້ຮັບການຢັ້ງຢືນ ຈາກຜູ້ກວດກາບັນຊີທີ່ໄດ້ກ່າວມາຂ້າງເທິງ ຈຶ່ງຖືວ່າບັນຊີປະຈຳປີນັ້ນຖືກຕ້ອງຕາມກົດໝາຍ.

### ມາດຕາ 21. ການກວດກາຈາກລັດຖະບານ

ທະນາຄານແຫ່ງ ສ ປປ ລາວ ຕ້ອງໄດ້ຮັບການກວດກາ ຈາກລັດຖະບານເປັນປົກກະຕິ. ຜູ້ກວດກາຈາກລັດຖະບານ ຖືກແຕ່ງຕັ້ງ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ, ມີສິດຮຽກເອົາຂໍ້ມູນເອກະສານ ຫລື ສອບຖາມບັນຫາຕ່າງໆ ຈາກເຈົ້າໜ້າທີ່ຂອງທະນາຄານໄດ້ໃນເວລາທີ່ຕົນພວມດຳເນີນການກວດກາ ເພື່ອເຮັດໃຫ້ການກວດກາຂອງຕົນສຳເລັດຜົນ.

ຜູ້ກວດກາຈາກລັດຖະບານ ມີສິດເຂົ້າຮ່ວມທຸກກອງປະຊຸມສາມັນ, ວິສາມັນຂອງສະພາບໍລິຫານຂອງທະນາຄານ, ມີສິດອອກຄຳເຫັນໃນກອງປະຊຸມດັ່ງກ່າວ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີທີ່ຄວາມເຫັນຜູ້ກວດກາຈາກລັດຖະບານ ຫາກແຕກຕ່າງກັບມະຕິ ຂອງ ສະພາບໍລິຫານນັ້ນຜູ້ກວດກາ ຈາກລັດຖະບານຕ້ອງລາຍງານໃຫ້ນາຍົກລັດຖະມົນຕີຊາບ.

### ມາດຕາ 22. ການຮັກສາຄວາມລັບ

ໃນເວລາປະຕິບັດໜ້າທີ່ຂອງຕົນຢູ່ ຫລື ປະຕິບັດໜ້າທີ່ສຳເລັດແລ້ວ ຜູ້ກວດກາທຸກຄົນຕ້ອງຮັກສາຄວາມລັບ ໃນບັນຫາທີ່ຕົນໄດ້ຮູ້, ໄດ້ເຫັນກ່ຽວກັບເອກະສານ, ຂໍ້ມູນຕ່າງໆຂອງທະນາຄານແຫ່ງ ສ ປປ ລາວ, ທະນາຄານທຸລະກິດ ຫລື ສະຖາບັນການເງິນ ເວັ້ນເສຍແຕ່ໄດ້ຮັບ ອະນຸຍາດ ຈາກສະພາບໍລິຫານ ຫລື ຄຳສັ່ງຈາກສານເທົ່ານັ້ນ.

## ໝວດທີ 7 ຫົວໜ່ວຍເງິນຕາ, ທະນະບັດ ແລະ ເງິນຫລຽນ

### ມາດຕາ 23. ຫົວໜ່ວຍເງິນຕາຂອງ ສ ປປ ລາວ

ຫົວໜ່ວຍເງິນຕາຂອງ ສ ປປ ລາວແມ່ນເງິນກີບ ຊຶ່ງມີເຄື່ອງໝາຍ "ກີບ" ໜຶ່ງກີບແບ່ງອອກເປັນ ຮ້ອຍອັດ.

### ມາດຕາ 24. ການພິມທະນະບັດ ແລະ ການຫລໍ່ເງິນຫລຽນ

ທະນາຄານແຫ່ງ ສ ປປ ລາວ ຈະພິມທະນະບັດ ແລະ ຫລໍ່ເງິນຫລຽນ, ກຳນົດສ່ວນປະກອບ, ຮູບພາບ ແລະ ມູນຄ່າຂອງທະນະບັດ ແລະ ການຫລໍ່ເງິນຫລຽນອອກຈໍລະຈອນ ຫລັງຈາກໄດ້ຮັບຄວາມເຫັນດີຈາກ ລັດຖະບານ.

ທະນາຄານແຫ່ງ ສ ປປ ລາວ ຕ້ອງຮັບປະກັນເງື່ອນໄຂທີ່ຈຳເປັນ ໃນການພິມທະນະບັດ, ເອກະສານໃບຖອນເງິນໄດ້ທັນທີ ແລະ ການຫລໍ່ເງິນຫລຽນ ແລະ ທຸກບັນຫາທີ່ກ່ຽວຂ້ອງ ກັບຄວາມປອດໄພຂອງ ສາງທະນະບັດ ແລະ ເງິນຫລຽນທີ່ບໍ່ທັນໄດ້ນຳອອກຈຳໜ່າຍ. ແທ່ນພິມທະນະບັດ, ເບົ້າຫລໍ່

ເງິນຫລຽນ, ທະນະບັດ ແລະ ເງິນຫລຽນທີ່ຖືກຖອນຄືນຈາກການຈໍລະຈອນ ຕ້ອງໄດ້ຮັບການປົກປັກຮັກສາໄວ້ ຫລື ທຳລາຍຖິ້ມຕາມທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 25. ຄວາມສາມາດຊື້ຕາມກົດໝາຍ

ທະນະບັດ ແລະ ເງິນຫລຽນທີ່ທະນະຄານແຫ່ງ ສ ປປ ລາວ ນຳອອກຈໍລະຈອນ ແມ່ນ ຖືກຕ້ອງຕາມກົດໝາຍ ແລະ ມີຄວາມສາມາດຊື້ໃນທົ່ວດິນແດນຂອງ ສ ປປ ລາວ. ໃນທະນະບັດແຕ່ລະໃບ,ເງິນຫລຽນແຕ່ລະອັນ ຕ້ອງກຳນົດມູນຄ່າ ຢ່າງຈະແຈ້ງ.

### ມາດຕາ 26. ການຖອນເງິນຄືນຈາກການຈໍລະຈອນ

ທະນາຄານແຫ່ງ ສ ປປ ລາວ ສາມາດຖອນຄືນ ທະນະບັດ ແລະເງິນຫລຽນທີ່ບໍ່ແທດເໝາະກັບການຊົມໃຊ້ ໃນສະພາບໃໝ່ໂດຍໄດ້ຮັບຄວາມເຫັນດີຈາກລັດຖະບານ. ການຖອນເງິນນັ້ນຕ້ອງໄດ້ແຈ້ງໃຫ້ມວນຊົນຊາບ. ຜູ້ທີ່ມີທະນະບັດ ແລະ ເງິນຫລຽນທີ່ຖືກປະກາດຖອນຄືນຈາກການຈໍລະຈອນນັ້ນ ມີສິດປ່ຽນເອົາເງິນນຳທະນາຄານແຫ່ງ ສ ປປ ລາວຕາມມູນຄ່າໃນໃບເງິນ ຫລື ເງິນຫລຽນ. ການປ່ຽນເງິນສາມາດດຳເນີນໄດ້ ພາຍໃນກຳນົດສອງ ປີ ນັບແຕ່ມື້ປະກາດເປັນຕົ້ນໄປ.ໃນການປ່ຽນເງິນນີ້ບໍ່ໃຫ້ເກັບຄ່າບໍລິການ.

### ມາດຕາ 27. ການປ່ຽນເງິນທີ່ໃຊ້ບໍ່ໄດ້

ທະນາຄານແຫ່ງ ສ ປປ ລາວ ມີສິດ:

1. ກຳນົດເງື່ອນໄຂການປ່ຽນທະນະບັດ ທີ່ຈີກຂາດ ຫລື ຖືກທຳລາຍສ່ວນໃດສ່ວນໜຶ່ງ. ເງື່ອນໄຂຂອງການປ່ຽນນັ້ນ ຕ້ອງປະກາດໃຫ້ມວນຊົນຊາບ;

2. ຕັດສິນການປ່ຽນເງິນຫລຽນທີ່ຖືກເຈາະ, ຖືກຕັດ, ແຕກ, ຫັກ, ມີຮອຍຂີດຂຽນ, ບໍ່ມີຄຸນລັກສະນະຂອງເງິນ ຫລື ມີຮູບພາບ ທີ່ບໍ່ສາມາດ ຈຳແນກໄດ້.

### ມາດຕາ 28. ຄວາມຮັບຜິດຊອບກ່ຽວກັບການເຄື່ອນຍ້າຍທະນະບັດ

ທະນາຄານແຫ່ງ ສ ປປ ລາວ ຈະຮັບຜິດຊອບ ໃຊ້ແທນຄ່າເສຍຫາຍ ກ່ຽວກັບການເຄື່ອນຍ້າຍທະນະບັດ ແລະ ເງິນຫລຽນກໍຕໍ່ເມື່ອການເຄື່ອນຍ້າຍທະນະບັດ ຫລື ເງິນຫລຽນນັ້ນ ຫາກນອນຢູ່ໃນຄວາມຮັບຜິດຊອບຂອງຕົນ.

## ໝວດທີ 8 ຄັງສຳຮອງເງິນຕາຕ່າງປະເທດ, ການແລກປ່ຽນເງິນຕາຕ່າງປະເທດແລະ ຄັງສຳຮອງພິເສດ

### ມາດຕາ 29. ຄັງສຳຮອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສ ປປ ລາວ ສ້າງ ແລະ ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ຕາມເງື່ອນໄຂ ແລະ ເນື້ອໃນຂອງລະບຽບການສະເພາະ ທີ່ທະນາຄານແຫ່ງ ສ ປປ ລາວ

ເປັນຜູ້ກຳນົດອອກໃນແຕ່ລະໄລຍະ ໂດຍໄດ້ຮັບຄວາມເຫັນດີຈາກ ລັດຖະບານ.

ຄັງສຳຮອງເງິນຕາຕ່າງປະເທດປະກອບດ້ວຍຊັບສິນທັງຫມົດ ຫລື ອັນໃດອັນຫນຶ່ງດັ່ງຕໍ່ໄປນີ້:

1. ຄຳ;

2. ເງິນຕາຕ່າງປະເທດ ຊຶ່ງເປັນທະນະບັດ ແລະ ເງິນຫລຽນ ຫລື ເງິນຝາກໃນບັນຊີທະນາຄານຕ່າງປະເທດ ດ້ວຍສະກຸນເງິນແຂງໃດຫນຶ່ງ ແລະ ຢູ່ໃນປະເທດໃດຫນຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ;

3. ຊັບສິນທີ່ສາກົນຮັບຮູ້ວ່າ ເປັນເງິນຕາຕ່າງປະເທດ:

- ເງິນສຳຮອງຂອງ ສ ປປ ລາວ ຢູ່ ກອງທຶນສາກົນ;

- ສິດຖອນເງິນພິເສດຂອງ ສ ປປ ລາວ ໃນກອງທຶນສາກົນ ຊຶ່ງສາກົນເອີ້ນວ່າ ເງິນເດເຕແອສ;

4. ພັນທະບັດແລກເງິນ, ໃບສັນຍາໃຊ້ຫນີ້, ພັນທະບັດຄັງເງິນ ແລະ ພັນທະບັດອື່ນໆທີ່ຈຳຫນ່າຍ ຫລື ຄ້ຳປະກັນ ໂດຍລັດຖະບານຕ່າງປະເທດ ຫລື ສະຖາບັນການເງິນສາກົນ ເປັນເງິນຕາຕ່າງປະເທດສະກຸນໃດຫນຶ່ງ. ເງິນຕາຕ່າງປະເທດດັ່ງກ່າວ ສາມາດຈ່າຍຢູ່ພາຍໃນ ແລະ ນອກ ສ ປປ ລາວ ຕາມການຕົກລົງເຫັນດີ ຂອງ ສະພາບໍລິຫານທະນາຄານ;

5. ຊັບສິນອື່ນໆທີ່ຖືວ່າເປັນເງິນຕາ ຕ່າງປະເທດຕາມການຕົກລົງຂອງສະພາບໍລິຫານ. ເພື່ອຮັບປະກັນການຊຳລະ ຢູ່ໃນສາກົນ ທະນະຄານແຫ່ງ ສ ປປ ລາວ ຕ້ອງຄຸ້ມຄອງຄັງສຳຮອງໃຫ້ຢູ່ໃນລະດັບເຫມາະສົມ.

## ມາດຕາ 30. ການລາຍງານສະພາບ ຄັງສຳຮອງເງິນຕາຕ່າງປະເທດ

ສະພາບໍລິຫານຕ້ອງລາຍງານໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ ເດືອນລະຫນຶ່ງຄັ້ງ ກ່ຽວກັບສະພາບຂອງຄັງສຳຮອງເງິນຕາຕ່າງປະເທດ.

ໃນເມື່ອສະພາບໍລິຫານຫາກເຫັນວ່າ ຄັງສຳຮອງເງິນຕາຕ່າງປະເທດຫລຸດລົງ ຫລື ມີທ່າອຽງຫລຸດລົງຜິດປົກກະຕິແລ້ວ ທະນາຄານແຫ່ງ ສ ປປ ລາວ ຕ້ອງ ລາຍງານໃຫ້ລັດຖະບານຊາບດ່ວນ ພ້ອມທັງສະເຫນີມາດຕະການຕ່າງໆທີ່ຈຳເປັນເພື່ອແກ້ໄຂສະພາບການດັ່ງກ່າວ ໃຫ້ຄືນສູ່ປົກກະຕິ ແລະ ສືບຕໍ່ລາຍງານເປັນໄລຍະ ຢ່າງຫນ້ອຍເດືອນລະສອງຄັ້ງ ຈົນກ່ວາສະພາບການ ຈະກັບຄືນສູ່ປົກກະຕິ.

## ມາດຕາ 31. ການດຳເນີນທຸລະກິດຂອງ ທະນາຄານ

ທະນາຄານແຫ່ງ ສ ປປ ລາວ ດຳເນີນທຸລະກິດເງິນຕາ ຕ່າງປະເທດ, ໂລຫະປະເສີດ ແລະ ວັດຖຸມີຄ່າອື່ນໆ ຕາມການຕົກລົງຂອງສະພາບໍລິຫານດັ່ງນີ້:

1. ຊື້,ຂາຍຄຳແທ່ງ, ຄຳຮູບປະພັນ, ໂລຫະປະເສີດ ແລະ ວັດຖຸມີຄ່າອື່ນໆ

2. ຊື້,ຂາຍເງິນຕາຕ່າງປະເທດ ດ້ວຍເຄື່ອງມືທີ່ເຄີຍນຳໃຊ້ທົ່ວໄປ;

3. ຊື້,ຂາຍພັນທະບັດຄັງເງິນ ແລະ ພັນທະບັດອື່ນໆທີ່ຈຳໜ່າຍ ຫລື ຄ້ຳປະກັນໂດຍ ລັດຖະບານ ຕ່າງປະເທດ ຫລື ອົງການ ການເງິນສາກົນ.

4. ເປີດ ແລະ ຮັກສາບັນຊີເງິນຝາກ ຢູ່ນຳບັນດາອົງການຈັດຕັ້ງການເງິນສາກົນ, ບັນດາທະນາຄານກາງ, ອົງການການເງິນ ນັບທັງສະຖາບັນການເງິນອື່ນໆ ທີ່ໄດ້ຮັບອະນຸຍາດເປັນທາງການ ຢູ່ຕ່າງປະເທດ;

5. ຮັບເປີດ, ຖືບັນຊີເງິນຝາກ ແລະ ຮັບເປັນຕົວແທນ ໃຫ້ອົງການຂອງຕ່າງປະເທດທີ່ກ່າວໃນຂໍ້ "4" ຂອງມາດຕານີ້ ຫລື ຂອງລັດຖະບານ ແລະຂອງ ອົງການລັດຖະບານ ຕ່າງປະເທດເຫລົ່ານັ້ນ.

ທະນາຄານແຫ່ງ ສ ປປ ລາວ ກຳນົດ, ປະກາດໃຊ້ ແລະ ຄຸ້ມຄອງອັດຕາແລກປ່ຽນ, ຊື້, ຂາຍ ຫລື ດຳເນີນທຸລະ ກິດເງິນຕາ ຕ່າງປະເທດ ເປັນແຕ່ລະໄລຍະ.

## ມາດຕາ 32. ຂອບເຂດການພົວພັນທຸລະກິດ ຂອງ ທະນາຄານ

ທະນາຄານແຫ່ງ ສ ປປ ລາວ ພົວພັນທຸລະກິດໄດ້ສະເພາະແຕ່ກັບອົງການຂອງລັດຖະບານ, ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຢູ່ພາຍໃນປະເທດ, ອົງການຂອງລັດຖະບານຕ່າງປະເທດ, ອົງການ ການເງິນສາກົນ, ທະນາຄານກາງ,ອົງການ ການເງິນ ແລະ ສະຖາບັນການເງິນຕ່າງປະເທດ.

## ມາດຕາ 33. ບັນຊີຄັງສຳຮອງພິເສດ

ບັນຊີຄັງສຳຮອງພິເສດ ແມ່ນບັນຊີທີ່ຈົດກ່າຍກຳໄລ ຫລື ການຂາດທຶນ ປະຈຳປີຂອງ ທະນາຄານແຫ່ງ ສ ປປ ລາວ ຊຶ່ງເກີດຈາກການປ່ຽນແປງມູນຄ່າຊັບສິນ ຫລື ໜີ້ສິນເປັນຄຳ,ເປັນເດເຕແອສ ຫລື ເກີດຈາກການປ່ຽນແປງ ຊັບສິນ ຫລື ໜີ້ສິນ ທີ່ເປັນເງິນຕາ ຕ່າງປະເທດຂອງລັດຖະບານທຽບໃສ່ເງິນກີບຂອງ ສ ປປ ລາວ ທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

## ມາດຕາ 34. ວິທີການແກ້ໄຂຄັງສຳຮອງພິເສດ

ເມື່ອທະນາຄານແຫ່ງ ສ ປປ ລາວ ຫາກມີການຜິດດ່ຽງ ຂາດທຶນປະຈຳປີ ຊຶ່ງເກີດຈາກການປ່ຽນແປງຕາມທີ່ກ່າວໄວ້ໃນມາດຕາ 33 ຂ້າງເທິງນັ້ນຕ້ອງໄດ້ຫັກເງິນ ຈາກຍອດເຫລືອຂອງບັນຊີຄັງສຳຮອງພິເສດ ເພື່ອທົດແທນການຂາດທຶນ. ຖ້າວ່າຍອດເຫລືອໃນບັນຊີນັ້ນ ຫາກບໍ່ພຽງພໍແລ້ວ ລັດຖະບານຕ້ອງພິມຈຳໜ່າຍ ພັນທະບັດ ປະເພດປ່ຽນມືບໍ່ໄດ້ ອອກໃຫ້ທະນາຄານແຫ່ງ ສ ປປ ລາວ ໃຫ້ຄົບຈຳນວນຂາດທຶນ ແລະ ຕາມເງື່ອນໄຂລະບຽບການຂອງ ທະນາຄານແຫ່ງ ສ ປປ ລາວ.

ກຳໄລ ຫລືການຂາດທຶນ ທີ່ກ່າວໄວ້ຂ້າງເທິງນີ້ ຈະບໍ່ຄິດໄລ່ເຂົ້າໃນກຳໄລປະຈຳປີ ຂອງທະນາຄານແຫ່ງ ສ ປປ ລາວ.

ໃນທຸກທ້າຍປີຍອດເຫລືອເງິນທັງໝົດ ຂອງ ບັນຊີຄັງສຳຮອງພິເສດ ຕ້ອງນຳໃຊ້ເພື່ອທົດແທນຄ່າພັນທະບັດ ທີ່ລັດຖະບານໄດ້ພິມອອກ ຕາມທີ່ໄດ້ກຳນົດໄວ້ໃນວັກເທິງ ຂອງມາດຕານີ້.

ການມອບ ຫລື ຖອນເງິນ ຈາກບັນຊີຄັງສຳຮອງພິເສດນັ້ນ ແມ່ນແນໃສ່ເພື່ອຮັບໃຊ້ເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕານີ້ເທົ່ານັ້ນ.

## ໝວດທີ 9 ການພົວພັນ ກັບສະຖາບັນການເງິນ

### ມາດຕາ 35. ສິດ ແລະ ຂໍ້ຕ້ອງຫ້າມໃນການເຄື່ອນໄຫວ

ທະນາຄານແຫ່ງ ສ ປປ ລາວ ສາມາດຮັບເປີດບັນຊີເງິນຝາກ ແລະ ຮັບຝາກເງິນ ຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆຊຶ່ງເອີ້ນຫຍໍ້ວ່າ "ເຈົ້າຂອງບັນຊີ" ຕາມລະບຽບການທີ່ທະນາຄານ ແຫ່ງ ສ ປປ ລາວ ກຳນົດອອກ.

ທະນາຄານແຫ່ງ ສ ປປ ລາວ ບໍ່ມີສິດລົງທຶນດຳເນີນທຸລະກິດທົ່ວໄປ ນອກຈາກທີ່ບັນຍັດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 36. ການຊື້, ຂາຍເອກະສານມີຄ່າ

ທະນາຄານແຫ່ງ ສ ປປ ລາວ ມີສິດຊື້,ຂາຍ, ຮັບຊື້ ຫລື ຮັບຊ່ວງຊື້ຫລຸດ ເອກະສານມີຄ່າຕ່າງໆ ຈາກເຈົ້າຂອງບັນຊີຕາມລະບຽບການທີ່ໄດ້ກຳນົດໄວ້ດັ່ງລຸ່ມນີ້:

1. ພັນທະບັດແລກເງິນ, ໃບສັນຍາໃຊ້ໜີ້, ໃບຢັ້ງຢືນເງິນຝາກ ແລະ ແຊັກ ເພື່ອເປົ້າໝາຍການຄ້າ,ອຸດສາຫະກຳ ຫລື ກະສິກຳ;

2. ພັນທະບັດຄັງເງິນ ແລະ ພັນທະບັດອື່ນໆ ທີ່ລັດເປັນຜູ້ຄ້ຳປະກັນ ຫລື ນຳອອກຈຳໜ່າຍສູ່ມວນຊົນ;

3. ພັນທະບັດທີ່ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ຈຳໜ່າຍອອກ.

ເອກະສານນີ້ຈະມີຖານະຊຳລະໜີ້ໄດ້ກໍຕໍ່ເມື່ອມີສອງລາຍເຊັນ ຫລື ຫລາຍກວ່ານັ້ນ ຊຶ່ງໃນນັ້ນຕ້ອງມີລາຍເຊັນຂອງສະຖາບັນການເງິນ. ເອກະສານມີຄ່າດັ່ງກ່າວ ຕ້ອງໄດ້ຊຳລະຄືນພາຍໃນກຳນົດ ຮ້ອຍແປດສິບສາມວັນ ນັບແຕ່ມື້ທະນາຄານໄດ້ຮັບຊື້ເປັນຕົ້ນໄປ.

ທະນາຄານແຫ່ງ ສ ປປ ລາວ ສາມາດເອົາເງິນໃຫ້ຢືມລ່ວງໜ້າແກ່ເຈົ້າຂອງບັນຊີໄດ້ພາຍໃນກຳນົດບໍ່ໃຫ້ກາຍ ຮ້ອຍແປດສິບສາມວັນແຕ່ຕ້ອງປະຕິບັດຕາມລະບຽບການ ທີ່ສະພາບໍລິຫານໄດ້ກຳນົດອອກ.

### ມາດຕາ 37. ການໃຫ້ກູ້ຢືມເງິນລ່ວງໜ້າ ໂດຍມີການຄ້ຳປະກັນ.

ທະນາຄານແຫ່ງ ສ ປປ ລາວມີສິດໃຫ້ກູ້ຢືມເງິນລ່ວງໜ້າ ແກ່ເຈົ້າຂອງບັນຊີ ໂດຍມີການຄ້ຳປະກັນ ດ້ວຍເອກະສານທີ່ມີຄ່າ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 36 ຂອງກົດໝາຍສະບັບນີ້ ແລະ ຕາມລະບຽບການທີ່ສະພາບໍລິຫານ ໄດ້ກຳນົດອອກ ຫລື ດ້ວຍບັນດາເອກະສານເຄື່ອງມື ທີ່ບົ່ງໄວ້ດັ່ງ ນີ້:

- ພັນທະບັດຄັງເງິນ ແລະ ພັນທະບັດອື່ນໆ ທີ່ຄ້ຳປະກັນຈາກລັດໃຫ້ແກ່ມວນຊົນ;
- ພັນທະບັດສິນຄ້າ, ໃບຢັ້ງຢືນກຳມະສິດອື່ນໆ ກ່ຽວກັບສິນຄ້າທີ່ມີການປະກັນໄພຢ່າງຄັກແນ່;
- ຊັບສິນອື່ນໆທີ່ທະນາຄານແຫ່ງ ສ ປປ ລາວ ໄດ້ຮັບອະນຸຍາດໃຫ້ຊື້, ຂາຍ ໄດ້ຕາມມາດຕາ 31 ຂອງກົດໝາຍສະບັບນີ້.

### ມາດຕາ 38. ການໃຫ້ກູ້ຢືມເງິນລ່ວງໜ້າໂດຍບໍ່ມີການຄໍ້າປະກັນ.

ທະນາຄານແຫ່ງ ສ ປປ ລາວ ສາມາດໃຫ້ກູ້ຢືມເງິນລ່ວງໜ້າ ໂດຍບໍ່ມີຫລັກຊັບຄໍ້າປະກັນ ຕາມ ການຕົກລົງ ແລະ ຕາມລະບຽບການພິເສດຂອງ ສະພາບໍລິຫານ ໃນກໍລະນີມີຄວາມຈໍາເປັນພິເສດ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ດ້ານການເງິນຂອງຜູ້ກູ້ຢືມໃຫ້ມີຄວາມສະດວກຂຶ້ນ.

### ມາດຕາ 39 (ໃໝ່). ການກໍານົດອັດຕາດອກເບ້ຍ.

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກໍານົດ ແລະ ປະກາດໃຊ້ອັດຕາດອກເບ້ຍຮັບຊ່ວງຊື້ຫລຸດພັນທະບັດ ແລະ ອັດຕາດອກເບ້ຍໃຫ້ກູ້ຢືມລ່ວງໜ້າຂອງຕົນຕໍ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ. ສ່ວນທະນາຄານທຸລະກິດ ແລະ ສາຖາບັນການເງິນນັ້ນອະນຸຍາດໃຫ້ປະຕິບັດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຕໍ່ລູກຄ້າທົ່ວໄປຕາມກົນໄກເສດຖະກິດຕະຫລາດທີ່ມີການຄຸ້ມຄອງລັດ.

### ມາດຕາ 40 (ໃໝ່). ການຮັກສາ ລະດັບເງິນແຮຝາກບັງຄັບ

ທະນາຄານແຫ່ງ ສ ປປ ລາວມີສິດກໍານົດໃຫ້ທະນາຄານທຸລະກິດ ແລະ ສາຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຮັກສາລະດັບປົກກະຕິຂອງເງິນແຮຝາກບັງຄັບເບື້ອງຕົ້ນ ແລະ ເງິນແຮຝາກບັງຄັບເພີ້ມເຕີມນັບທັງຊັບສິນໃຊ້ເປັນເງິນສົດໄດ້ໄວ ເພື່ອຮັບປະກັນ ການປະຕິບັດ ນະໂຍບາຍເງິນຕາ, ການຈ່າຍເງິນຝາກ ແລະ ເຮັດພັນທະຄ້າຍຄືກັນຊຶ່ງສະພາບໍລິຫານໄດ້ກໍານົດໄວ້.

### ມາດຕາ 41 (ໃໝ່). ການກໍານົດຖານະເງິນຕາຕ່າງປະເທດສຸດທິ

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກໍານົດໃຫ້ທະນາຄານທຸລະກິດ ແລະ ສາຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນຮັກສາຖານະເງິນຕາຕ່າງປະເທດ ສຸດທິໄວ້ເປັນສະກຸນເງິນແຂງໃດໜຶ່ງ ຫລື ຫລາຍສະກຸນເງິນຕາມລະບຽບການ ທີ່ທະນາຄານ ແຫ່ງ ສ ປປ ລາວ ວາງອອກ.

### ມາດຕາ 42 (ໃໝ່). ການກວດກາລະບຽບການຕ່າງໆ ຂອງສະຖາບັນການເງິນ

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກວດກາລະບຽບການຕ່າງໆ ແລະ ໃຫ້ຄໍາແນະນໍາກ່ຽວກັບລະບຽບການສິນເຊື່ອ ແລະ ລະບຽບການອື່ນໆ ຂອງທະນາຄານທຸລະກິດ ແລະ ສາຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນລວມທັງການປະຕິບັດລະບຽບການດັ່ງກ່າວ.

### ມາດຕາ 43 (ໃໝ່). ການຄໍ້າປະກັນເງິນກູ້ຈາກຕ່າງປະເທດ.

ທະນາຄານແຫ່ງ ສ ປປ ລາວ ຈະໃຫ້ການຄໍ້າປະກັນແກ່ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນໃນການກູ້ຢືມເງິນຈາກຕ່າງປະເທດຕາມການເຫັນດີຂອງລັດຖະບານ.

### ມາດຕາ 44 (ໃໝ່). ເຄື່ອງມືໃນການ ຊໍາລະ

ທະນາຄານແຫ່ງ ສ ປປ ລາວ ສ້າງກົນໄກການຊໍາລະເພື່ອອໍານວຍຄວາມສະດວກໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນມີເຄື່ອງມື ໃນການຊໍາລະ ແລະ ນໍາໃຊ້ການຊໍາລະດ້ວຍແຊັກ ແລະ ເຄື່ອງມືອື່ນໆຢ່າງກ້ວາງຂວາງ.

## ໝວດທີ 10 ການພົວພັນ ກັບລັດຖະບານ

### ມາດຕາ 45. ການລາຍງານຕໍ່ ລັດຖະບານ

ທະນາຄານແຫ່ງ ສ ປປ ລາວ ມີໜ້າທີ່ລາຍງານໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ.

ໃນກໍລະນີທີ່ເຫັນວ່າມີບັນຫາທີ່ຈະເປັນອຸປະສັກແກ່ການປະຕິບັດໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນສໍາເລັດນັ້ນ ທະນາຄານຕ້ອງລາຍງານໃຫ້ລັດຖະບານຊາບດ່ວນ.

### ມາດຕາ 46. ບັນຊີເງິນຝາກຂອງລັດຖະບານ

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ຮັບຝາກເງິນ ຂອງ ລັດຖະບານ. ລັດຖະບານສາມາດເປີດບັນຊີເງິນຝາກ ແລະ ນໍາໃຊ້ການບໍລິການທົ່ວໄປຂອງ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນໆ ຕາມທີ່ເຫັນວ່າເໝາະສົມ.

### ມາດຕາ 47. ການຖືບັນຊີເງິນຝາກ ຂອງລັດຖະບານຢູ່ຕ່າງປະເທດ

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ຖືບັນຊີເງິນຝາກທີ່ເປັນເງິນຕາຕ່າງປະເທດ ຂອງລັດຖະບານຢູ່ຕ່າງປະເທດ.

### ມາດຕາ 48. ການຄຸ້ມຄອງພັນທະບັດ

ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ຈໍາໜ່າຍ,ຊື້,ຂາຍ ແລະ ຄຸ້ມຄອງພັນທະບັດ ຂອງລັດຖະບານ ຫລື ພັນທະບັດທີ່ລັດຖະບານເປັນຜູ້ຄໍ້າປະກັນ ທີ່ຈໍາໜ່າຍອອກສູ່ມວນຊົນ ຕາມຄວາມສາມາດຊື້ໄດ້ຂອງມວນຊົນສ່ວນໃຫຍ່ ດ້ວຍການຕົກລົງຂອງລັດຖະບານ.

### ມາດຕາ 49. ການກູ້ຢືມເງິນຈາກຕ່າງປະເທດ

ທະນາຄານແຫ່ງ ສ ປປ ລາວ ມີໜ້າທີ່ຄົ້ນຄ້ວາໃຫ້ຄວາມເຫັນແກ່ລັດຖະບານ ໃນການກູ້ຢືມເງິນຈາກຕ່າງປະເທດ. ສໍາລັບ ບັນດາທະນາຄານທຸລະກິດ, ສະຖາບັນການເງິນ ແລະ ວິສາຫະກິດນັ້ນ ກ່ອນຈະກູ້ຢືມເງິນຈາກຕ່າງປະເທດຕ້ອງໄດ້ຮັບຄວາມເຫັນດີຈາກທະນາຄານແຫ່ງ ສ ປປ ລາວ.

### ມາດຕາ 50. ການໃຫ້ກູ້ຢືມເງິນລ່ວງໜ້າ ແກ່ລັດຖະບານ

ທະນາຄານແຫ່ງ ສ ປປ ລາວ ມີສິດໃຫ້ກູ້ຢືມເງິນລ່ວງໜ້າຊົ່ວຄາວ ແກ່ລັດຖະບານ ໃນກໍລະນີຈໍາເປັນ ໂດຍລັດຖະບານ ຈະທົດແທນຕົ້ນທຶນກູ້ຢືມ ພ້ອມທັງດອກເບ້ຍພາຍໃນກໍານົດ ຫົກເດືອນ.

ສຳລັບອັດຕາດອກເບ້ຍດັ່ງກ່າວ ທະນາຄານແຫ່ງ ສ ປປ ລາວ ເປັນຜູ້ກຳນົດ ຕາມສະພາບຄວາມເປັນຈິງໃນແຕ່ລະໄລຍະ.

ທະນາຄານແຫ່ງ ສ ປປ ລາວ ມີສິດໃຫ້ກູ້ຢືມເງິນລ່ວງໜ້າເພີ່ມເຕີມ ແກ່ລັດຖະບານຕາມເງື່ອນໄຂທີ່ໄດ້ຕົກລົງກັນ ເພື່ອຈ່າຍຄ່າບຳລຸງ ແລະ ຈ່າຍຄ່າອື່ນໆທີ່ສືບເນື່ອງມາຈາກການເຂົ້າຮ່ວມເປັນສະມາຊິກຂອງ ສ ປປ ລາວ ຢູ່ໃນບັນດາອົງການຈັດຕັ້ງການເງິນສາກົນ, ສະຖາບັນການເງິນສາກົນ ແລະ ອົງການຈັດຕັ້ງສາກົນອື່ນໆ.

### ມາດຕາ 51. ຂອບເຂດການໃຫ້ກູ້ຢືມລ່ວງໜ້າ

ລັດຖະບານ ກູ້ຢືມເງິນລ່ວງໜ້າຈາກທະນາຄານແຫ່ງ ສ ປປ ລາວ ໄດ້ ໃນຈຳນວນທີ່ບໍ່ເກີນຊາວຫ້າສ່ວນ ຮ້ອຍ ຂອງ ລາຍຮັບງົບປະມານແຫ່ງລັດປະຈຳປີສະເລ່ຍໃນໄລຍະສາມປີຜ່ານມາ. ການຄິດໄລ່ລາຍຮັບດັ່ງກ່າວ ບໍ່ໃຫ້ກວມເອົາລາຍຮັບຈາກການກູ້ຢືມ, ການຊ່ວຍເຫລືອລ້າ ແລະ ການຊ່ວຍເຫລືອທາງດ້ານເສດຖະກິດດ້ວຍຮູບການອື່ນໆ.

ໃນກໍລະນີທີ່ເຫັນວ່າການໃຫ້ກູ້ຢືມນີ້ ຫາກມີການສ່ຽງໄພແລ້ວ ທະນາຄານແຫ່ງ ສ ປປ ລາວ ຕ້ອງລາຍງານໃຫ້ລັດຖະບານຊາບ ພ້ອມທັງສະເໜີມາດຕະການແກ້ໄຂ.

### ມາດຕາ 52. ການພົວພັນກັບອົງການຈັດຕັ້ງການເງິນສາກົນ

ທະນາຄານແຫ່ງ ສ ປປ ລາວ ເປັນບ່ອນຮັບຝາກເງິນ ແລະ ເປັນຕົວແທນການເງິນໃຫ້ທຸກອົງການ ຈັດຕັ້ງການເງິນສາກົນຊຶ່ງ ສ ປປ ລາວ ເປັນສະມາຊິກ.

## ໝວດທີ 11 ບັນຊີທະນາຄານ ແລະ ການ ລາຍງານ

### ມາດຕາ 53 (ໃໝ່). ສົກປີ ການບັນຊີທະນາຄານ

ສົກປີ ການບັນຊີ ຂອງທະນາຄານແຫ່ງ ສ ປປ ລາວ ເລີ່ມຕົ້ນ ໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

ທະນາຄານແຫ່ງ ສ ປປ ລາວ, ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປລາວ ຕ້ອງປະຕິບັດລະບຽບການບັນຊີທະນາຄານແຫ່ງ ສ ປ ປ ລາວ ແລະ ການບັນຊີຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຊຶ່ງໄດ້ປະກາດໃຊ້ໃນແຕ່ລະໄລຍະ.

### ມາດຕາ 54. ການລາຍງານປະຈຳປີຕໍ່ລັດຖະບານ

ພາຍຫລັງທີ່ໄດ້ປິດບັນຊີແລ້ວ ພາຍໃນກຳນົດ ສາມເດືອນ ທະນາຄານແຫ່ງ ສ ປປ ລາວ ຕ້ອງສົ່ງເອກະສານລາຍງານໃຫ້ລັດຖະບານຊາບດັ່ງຕໍ່ໄປນີ້:

- ບົດລາຍງານບາງບັນຫາທາງດ້ານເສດຖະກິດ;
- ບົດສະຫລຸບການເຄື່ອນໄຫວທຸລະກິດ ຂອງ ທະນາຄານແຫ່ງ ສ ປປ ລາວ ໃນປີຜ່ານມາ;

- ບັນຊີປະຈຳປີຂອງທະນາຄານຍັ້ງຢືນ ໂດຍຜູ້ກວດກາບັນຊີ.

ທະນາຄານແຫ່ງ ສ ປປ ລາວ ຕ້ອງພິມເຜີຍແຜ່ບົດລາຍງານປະຈຳປີກ່ຽວກັບບັນຫາເງິນຕາ ແລະ ບາງບັນຫາທາງດ້ານເສດຖະກິດ.

## ໝວດທີ 12 ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 55 (ໃໝ່). ການລະເມີດອັດຕາສ່ວນ ເງິນແຮຝາກບັງຄັບ ແລະ ລະບຽບການອື່ນໆ

ທະນາຄານທຸລະກິດ ຫລື ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານ ແຫ່ງ ສ ປປ ລາວ ທີ່ໄດ້ລະເມີດອັດຕາສ່ວນເງິນແຮຝາກບັງຄັບ ຫລື ຊັບສິນທີ່ໃຊ້ເປັນເງິນສົດໄດ້ໄວ ຫລື ລະບຽບການອື່ນໆຈະຖືກປັບໃໝ ຫລື ຖືກລົງໂທດຕາມລະບຽບກົດໝາຍ.

### ມາດຕາ 56. ການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ

ບຸກຄົນໃດຫາກປະກອບຂໍ້ມູນ ຂ່າວສານ ທີ່ບໍ່ກົງກັບຄວາມເປັນຈິງ ໃຫ້ແກ່ທະນາຄານ ແຫ່ງ ສ ປປ ລາວໂດຍເຈດຕະນາຈະຖືກປັບໃໝ ຫລື ຖືກລົງໂທດຕາມລະບຽບກົດໝາຍ.

### ມາດຕາ 57. ການດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ

ບຸກຄົນໃດຫາກໄດ້ດຳເນີນທຸລະກິດທະນາຄານ ຫລື ສະຖາບັນການເງິນ ໂດຍບໍ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ຫລື ຖືກລົງໂທດຕາມລະບຽບກົດໝາຍ.

### ມາດຕາ 58. ການເປີດເຜີຍຄວາມລັບ

ພະນັກງານ ຫລື ບຸກຄົນໃດໄດ້ເກັບກຳ, ໄດ້ຮູ້ ຫລື ໄດ້ເຫັນຂໍ້ມູນຂ່າວສານຂອງທະນາຄານ ແຫ່ງ ສ ປປ ລາວ, ທະນາຄານທຸລະກິດ ຫລື ສະຖາບັນການເງິນ ໃນເວລາປະຕິບັດໜ້າທີ່ວຽກງານຂອງຕົນ ຫາກເປີດເຜີຍຂໍ້ມູນດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 22 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດທາງອາຍາ ໃນສະຖານເປີດເຜີຍຄວາມລັບທາງລັດຖະການ.

### ມາດຕາ 59. ການສວຍໃຊ້ໜ້າທີ່ຕຳແໜ່ງ

ພະນັກງານທະນາຄານຜູ້ໃດຫາກສວຍໃຊ້ໜ້າທີ່ຕຳແໜ່ງຂອງຕົນທີ່ບໍ່ຖືກຕ້ອງຕາມກົດໝາຍສະບັບນີ້ ເພື່ອຫາຜົນປະໂຫຍດສ່ວນຕົວ ຈະຖືກລົງໂທດຕາມກົດໝາຍອາຍາ.

### ມາດຕາ 60. ການລະເມີດອື່ນໆ

ບຸກຄົນໃດຫາກປອມແປງທະນະບັດ,ເງິນຫລຽນ ຫລື ເຄື່ອງມືຊຳລະ,ໃຊ້ທະນະບັດ,ເງິນຫລຽນ, ເຄື່ອງມືຊຳລະປອມ, ທຳລາຍທະນະບັດ ຫລື ເງິນຫລຽນ ດ້ວຍການຕັດ, ເຈາະຮູ,ຈີກ, ແຕ້ມ, ຂີດຂຽນໃສ່,ພິມໃສ່, ຈ້ຳກາໃສ່,ຕິດກາໃສ່ໃບທະນະບັດ ຫລື ດ້ວຍວິທີໃດກໍຕາມ ຊຶ່ງເຮັດໃຫ້ທະນະບັດ

ຫລື ເງິນຫລຽນຂອງທະນາຄານແຫ່ງ ສ ປປ ລາວ ທີ່ນຳອອກຈຳລະຈອນນັ້ນຖືກເສຍຫາຍໃຊ້ບໍ່ໄດ້ ຈະຖືກລົງໂທດຕາມກົດຫມາຍອາຍາ.

## ຫມວດທີ 13 ບົດບັນຍັດ ສຸດທ້າຍ

### ມາດຕາ 61. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດຫມາຍສະບັບນີ້.

### ມາດຕາ 62. ຜົນສັກສິດ

ກົດຫມາຍສະບັບນີມີຜົນສັກສິດ ນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດຫມາຍສະບັບນີ້ປ່ຽນແທນກົດຫມາຍ ວ່າດ້ວຍການສ້າງຕັ້ງທະນາຄານແຫ່ງ ສປປລາວ ເລກທີ 04 ລົງວັນທີ 10 ກໍລະກົດ 1990. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບ ກົດຫມາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 14 ຕຸລາ 1995

ປະທານສະພາແຫ່ງຊາດ

ສະຫມານ ວິຍະເກດ